ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ

ເລກທີ 097 /ກມສພ
ນະຄອນຫຼວງວຽງຈັນ, ວັນທີ 18 ກຸມພາ 2020

# ຄຳສັ່ງ
## ວ່າດ້ວຍການເພີ່ມທະວີການນຳພາຊີ້ນຳ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ

ເຖິງ: - ເລຂາຄະນະພັກ ກະຊວງ, ອົງການ ອ້ອມຂ້າງສູນກາງ.
- ເລຂາຄະນະພັກແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

ພັກ-ລັດເຮົາຍາມໃດ ກໍ່ຖືການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເປັນວຽກຍຸດທະສາດສຳຄັນ ແລະ ໄດ້ຊີ້ນຳການຈັດຕັ້ງປະຕິບັດ ໂດຍສຸມທຶນຮອນເຂົ້າໃສ່ການພັດທະນາຢ່າງແທດເຖິງ, ຕໍ່ເນື່ອງ ສາມາດເຮັດໃຫ້ຊົນນະບົດຢູ່ປະເທດເຮົາ ໄດ້ມີໂສມໜ້າໃໝ່ ແລະມີການຫັນປ່ຽນດີຂຶ້ນເປັນກ້າວໆ, ເປັນຕົ້ນ ພື້ນຖານດ້ານເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງຍົກລະດັບສູງຂຶ້ນຢ່າງບໍ່ຢຸດຢັ້ງ, ພື້ນຖານໂຄງລ່າງດ້ານຄົມມະນາຄົມ ກໍ່ຄືລະບົບສາທາລະນຸປະໂພກ ໄດ້ຮັບການຂະຫຍາຍຕົວ ໄປຮອດເຂດຫ່າງໄກສອກຫຼີກ, ສ້າງເງື່ອນໄຂສະດວກໃຫ້ແກ່ການດຳເນີນການຜະລິດ-ທຸລະກິດ ແລະ ການບໍລິການ; ຈຳນວນຄອບຄົວທຸກຍາກ ໄດ້ຫຼຸດລົງ, ຮາກຖານການເມືອງ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງ. ແຕ່ຄຽງຄູ່ກັນນັ້ນ ກໍ່ເຫັນວ່າ ໃນການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ຢູ່ປະເທດເຮົາ ຍັງມີບັນຫາຈຳນວນໜຶ່ງທີ່ຈະຕ້ອງເອົາໃຈໃສ່ແກ້ໄຂ, ເປັນຕົ້ນການນຳພາຊີ້ນຳຂອງຄະນະພັກ ແລະ ການຄຸ້ມຄອງ ຂອງອົງການປົກຄອງ ຫຼາຍບ່ອນບໍ່ທັນແທດເຖິງ ແລະຂາດຈຸດສຸມ, ແຜນປະຕິບັດງານ ລະຫວ່າງຂະແໜງການ, ອົງການຂັ້ນສູນກາງ ແລະຄະນະພັກ, ອົງການປົກຄອງຂັ້ນທ້ອງຖິ່ນ ໃນຫຼາຍກິດຈະການພັດທະນາ ບໍ່ທັນມີການປະສານກົມກຽວກັນ, ເຮັດໃຫ້ຫຼາຍກິດຈະການລົງທຶນ ບໍ່ທັນມີປະສິດທິຜົນ, ບໍ່ທັນຮັບປະກັນຄວາມຍືນຍົງ, ບາງບ່ອນຖືກປະປ່ອຍໃຫ້ຕົກຢູ່ໃນສະພາບຕາມມີຕາມເກີດ, ຫັນປ່ຽນຊັກຊ້າ, ບໍ່ທັນສ້າງສະຕິຕື່ນຕົວເປັນເຈົ້າການປົນຕົວພັດທະນາຂອງປະຊາຊົນ, ເກີດມີສະພາບອັນໃດກໍ່ຄອງຄອຍໃສ່ແຕ່ພັກ-ລັດ ສ້າງໃຫ້, ການພັດທະນາອາຊີບ, ການສ້າງລາຍໄດ້ຕົວຈິງ ແລະ ການປັບປຸງຄຸນນະພາບຊີວິດຂອງປະຊາຊົນ ຍັງຈຳກັດ, ບໍ່ທັນເລີ່ມຈາກຄວາມສາມາດຕົວຈິງ ແລະທ່າແຮງບົ່ມຊ້ອນຂອງແຕ່ລະບ່ອນ,ຮ້າຍແຮງໄປກວ່ານັ້ນ ການພັດທະນາຢູ່ບາງບ່ອນຍັງເຮັດໃຫ້ສູນເສຍຄຸນຄ່າ ແລະເອກະລັກ ດ້ານສັງຄົມ-ວັດທະນະທຳ ແລະສິ່ງແວດລ້ອມ ຂອງຊົນນະບົດ.

ດ້ວຍເຫດນັ້ນ, ອີງຕາມທິດຊີ້ນຳ ຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ X, ເພື່ອຍູ້ແຮງສ້າງການຫັນປ່ຽນທີ່ຕັ້ງໜ້າ ໃຫ້ແກ່ການພັດທະນາຊົນນະບົດ ແລະ

ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ. ກົມການເມືອງສູນກາງພັກ ຈຶ່ງ ອອກຄຳສັ່ງ ມາຍັງຄະນະພັກ ກະຊວງ, ອົງການ ແລະທ້ອງຖິ່ນໃນທົ່ວປະເທດ ດັ່ງນີ້:

I. <u>ທິດນຳ ການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ</u>.

1). ຍຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ການພັດທະນາຊົນນະບົດຮອບດ້ານ, ຖືເປັນໜ້າທີ່ຍຸດທະສາດ, ທັງເປັນວຽກບູລິມະສິດສຳຄັນຂອງພັກ-ລັດ ແລະທົ່ວສັງຄົມ; ພັດທະນາຊົນນະບົດ ຍາມໃດກໍ່ຕິດພັນກັບການແກ້ໄຂຄວາມທຸກຍາກ ແລະສ້າງຄວາມຮັ່ງມີ ໃຫ້ແກ່ປະຊາຊົນ, ເຊິ່ງບໍ່ພຽງແຕ່ແມ່ນການເຮັດຕາມຄວາມມຸ່ງມາດປາດຖະໜາອັນແຮງກ້າຂອງປະຊາຊົນ ແລະ ອຸດົມການອັນສູງສົ່ງຂອງພັກເຮົາເທົ່ານັ້ນ, ຫາກຍັງແມ່ນການເຂົ້າຮ່ວມປະຕິບັດພັນທະສາກົນໃນການພັດທະນາແບບຍືນຍົງ.

2). ຕ້ອງເຮັດໃຫ້ລະບົບການເມືອງຢູ່ຊົນນະບົດ ມີຄວາມເຂັ້ມແຂງ, ໜັກແໜ້ນ, ສາມາດນຳພາປະຊາຊົນ ເປັນເຈົ້າໃນການປົກປັກຮັກສາ, ພັດທະນາຕົນເອງ ແລະພັດທະນາບ້ານຊ່ອງໃຫ້ຫຼຸດພົ້ນຈາກຄວາມທຸກຍາກ ເຊິ່ງສະແດງອອກ: ເສດຖະກິດ ໄດ້ຮັບການພັດທະນາ, ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ຢູ່ຊົນນະບົດໄດ້ຮັບການປົວແປງໃຫ້ດີຂຶ້ນຈະແຈ້ງ; ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ; ມີສິ່ງແວດລ້ອມທີ່ດີ; ການສຶກສາ, ສາທາລະນະສຸກ ໄດ້ຮັບການຍົກລະດັບເຂົ້າສູ່ຄຸນນະພາບໃໝ່, ວັດທະນະທຳທີ່ເປັນເອກະລັກຂອງທ້ອງຖິ່ນ ໄດ້ຮັບການອະນຸລັກ ແລະ ເສີມຂະຫຍາຍຢ່າງຕັ້ງໜ້າ.

3). ພັດທະນາຊົນນະບົດ ຕ້ອງຮັບປະກັນຄວາມສົມດູນ ລະຫວ່າງການພັດທະນາເສດຖະກິດ ກັບການພັດທະນາສັງຄົມ ແລະປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະຍືນຍົງ, ຮັບປະກັນ ສະຖຽນລະພາບດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ.

4). ພັດທະນາຊົນນະບົດ ຕ້ອງຕິດພັນກັບການແກ້ໄຂຄວາມແຕກໂຕນຂອງການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດ, ແນໃສ່ສ້າງເປັນຕົວເມືອງຢູ່ແຕ່ລະເຂດແຄວ້ນຢ່າງເໝາະສົມ, ພັດທະນາຊົນນະບົດ ຕ້ອງໄປຕາມທິດຫັນເປັນອຸດສາຫະກຳ ແລະທັນສະໄໝ, ຫັນປ່ຽນການດຳລົງຊີວິດ ແລະການທຳມາຫາກິນແບບດັ້ງເດີມຕາມທຳມະຊາດ ໄປສູ່ແບບແຜນການດຳລົງຊີວິດໃໝ່ທີ່ກ້າວໜ້າ, ມີວິທະຍາສາດ; ຍູ້ແຮງການຜະລິດສິນຄ້າ ຕິດພັນກັບຕະຫຼາດແຕ່ຫົວທີ.

5). ການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ຕ້ອງຮັບປະກັນການຂຸດຄົ້ນກຳລັງແຮງສັງລວມ ແລະດຳເນີນການຢ່າງຮອບດ້ານ, ຖືເອົາການຫັນລົງກໍ່ສ້າງຮາກຖານການເມືອງເປັນວຽກຍຸດທະສາດ ທັງສ້າງໃຫ້ໄດ້ຄວາມຕື່ນຕົວ, ເປັນເຈົ້າຕົນເອງຂອງຮາກຖານ ແລະ ຂອງປະຊາຊົນບັນດາເຜົ່າ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ, ທັງປັບປຸງ ແລະ ກໍ່ສ້າງລະບົບການຈັດຕັ້ງການເມືອງຢູ່ຮາກຖານ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ເປັນບັນຫາຕັດສິນ; ສ້າງຄວາມສາມັກຄີປອງດອງ ຂອງປະຊາຊົນບັນດາເຜົ່າ ໃຫ້ແໜ້ນແຟ້ນ, ເຮັດໃຫ້ຊົນນະບົດ ມີຄວາມສະຫງົບຢ່າງໜັກແໜ້ນ.

6). ຕ້ອງເຮັດໃຫ້ວຽກງານພັດທະນາຊົນນະບົດ ຕິດພັນກັບການສ້າງໂຄງການຈຸດສຸມຜະລິດເປັນສິນຄ້າຂອງທົ່ວປະເທດ ເຊັ່ນ: ເຂດຜະລິດເຂົ້າ ເພື່ອຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ເປັນສິນຄ້າ ໃນບັນດາທົ່ງພຽງທົ່ວປະເທດ; ເຂດຈຸດສຸມພັດທະນາການລ້ຽງ

ສັດໃຫຍ່ ຢູ່ເຂດພູພຽງ, ເຂດພູດອຍທີ່ມີເງື່ອນໄຂ ໃນພາກເໜືອ, ພາກກາງ; ເຂດຈຸດສຸມປູກພືດ-ໄມ້ອຸດສາຫະກຳ ຢູ່ພາກກາງ ແລະພາກໃຕ້; ປູກພືດຜັກ, ໄມ້ໃຫ້ໝາກທີ່ມີມູນຄ່າສູງ ເປັນຕົ້ນແມ່ນເຂດຊົນນະບົດ, ຊານເມືອງຂອງນະຄອນຫຼວງວຽງຈັນ, ຕົວເມືອງໃຫຍ່ໃນເຂດພາກເໜືອ, ພາກກາງ, ພາກໃຕ້ ທີ່ມີພື້ນຖານໂຄງລ່າງອຳນວຍຄວາມສະດວກ, ເຂດເສດຖະກິດພິເສດທີ່ມີຕະຫຼາດຈຳໜ່າຍ. ສົ່ງເສີມການລົງທຶນເຂົ້າໃສ່ການປູກ-ການລ້ຽງ ດ້ວຍເຕັກໂນໂລຊີສູງ, ສະອາດ, ປອດສານພິດ ເພື່ອນຳພາຊາວກະສິກອນ ຜະລິດ ແລະ ຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ.

**II. ທິດທາງ, ໜ້າທີ່ຈຸດສຸມ.**

1). ໃຫ້ຍູ້ແຮງການສົ່ງເສີມການຜະລິດກະສິກຳ ແລະ ປ່າໄມ້ເປັນສິນຄ້າ ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງໄດ້ປຽບຂອງທ້ອງຖິ່ນ ແລະ ເຂດແຄວ້ນ, ຊຸກຍູ້ການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ (ປອດສານພິດ) ສະໜອງໃຫ້ແກ່ຕົວເມືອງ ປ່ຽນແທນການນຳເຂົ້າ, ການຜະລິດສິນຄ້າທີ່ເປັນທ່າແຮງໄດ້ປຽບ ເພື່ອສົ່ງອອກ.

2). ນຳໃຊ້ທີ່ດິນກະສິກຳ ທີ່ໄດ້ກຳນົດ ແລະປັກຫຼັກໝາຍເຂດສະຫງວນແລ້ວນັ້ນ ໃຫ້ມີປະສິດທິຜົນ ແລະຍືນຍົງ; ຮັບປະກັນສິດນຳໃຊ້ທີ່ດິນຂອງປະຊາຊົນ ເພື່ອໃຫ້ທີ່ດິນເປັນພາຫະນະການຜະລິດທີ່ຍືນຍົງ; ພັດທະນາທີ່ດິນກະສິກຳ ຕິດພັນກັບການສ້າງການເຕີບໂຕສີຂຽວ, ປົກປັກຮັກສາສິ່ງແວດລ້ອມ ແລະ ລະບົບນິເວດກະສິກຳ.

3). ໃຫ້ສືບຕໍ່ຈັດຕັ້ງການຜະລິດ ແລະ ການບໍລິການໃຫ້ແກ່ຊາວກະສິກອນ ໂດຍເລີ່ມຈາກການສ້າງເສດຖະກິດຮ່ວມມືຮູບແບບຕ່າງໆ ຢູ່ຊົນນະບົດ ໃຫ້ເຄື່ອນໄຫວມີຄຸນນະພາບ ແລະ ມີປະສິດທິຜົນ ໂດຍຜ່ານຮູບແບບພື້ນຕົວຮ່ວມກັນເປັນກຸ່ມ, ກ້າວໄປເຖິງການສ້າງຕັ້ງສະຫະກອນແບບໃໝ່ ຖືກຕ້ອງຕາມຫຼັກການ ການຈັດຕັ້ງຂອງສະຫະກອນ ຕິດພັນກັບຕະຫຼາດຈຳໜ່າຍ, ເຮັດໜ້າທີ່ບໍລິການເປັນຕົ້ນຕໍໃຫ້ແກ່ສະມາຊິກ; ລັດຕ້ອງມີນະໂຍບາຍຊ່ວຍໜູນດ້ານທຶນ ແລະ ການບໍລິການ, ຝຶກອົບຮົມ, ບໍລິຫານຈັດການ, ການຄ້າຂາຍຍົກ ແລະຕະຫຼາດຈຳໜ່າຍສິນຄ້າກະສິກຳ ດ້ວຍຫຼາຍຮູບແບບທີ່ມີປະສິດທິຜົນ; ປັບປຸງການຈັດຕັ້ງຮ່ວມມືຂອງຊາວກະສິກອນ ໃຫ້ເຂັ້ມແຂງດ້ວຍການຮ່ວມກັນເປັນເຈົ້າຂອງ ແລະ ມີການແບ່ງປັນຜົນກຳໄລໃຫ້ສະມາຊິກ ແລະສັງຄົມ ດ້ວຍຄວາມເປັນທຳ; ຊຸກຍູ້ສົ່ງເສີມບັນດາວິສະຫະກິດຈາກພາຍໃນ ແລະ ຕ່າງປະເທດ ລົງທຶນດ້ວຍເຕັກໂນໂລຊີທັນສະໄໝ ເຂົ້າໃນການພັດທະນາຊົນນະບົດ ແລະກະສິກຳ ຕາມທິດຫັນເປັນອຸດສາຫະກຳ ແລະທັນສະໄໝທີ່ລະກ້າວ; ສ້າງເງື່ອນໄຂໃຫ້ແກ່ຊາວກະສິກອນ ໄດ້ເຂົ້າຮ່ວມຜະລິດສິນຄ້າ ຕາມສັນຍາຂອງການຮ່ວມທຶນ ແລະ ການແບ່ງປັນຄວາມສ່ຽງໂດຍສາມາດຮັກສາສິດນຳໃຊ້ທີ່ດິນ ແລະການອອກແຮງງານ ຂອງຊາວກະສິກອນ.

4). ໃຫ້ຮີບຮ້ອນດຳເນີນການສະຫຼຸບປະເມີນຜົນ ບັນດາການຈັດຕັ້ງການຜະລິດ ຢູ່ຊົນນະບົດ ແລະການໃຫ້ເຊົ່າ, ສຳປະທານທີ່ດິນ ຜະລິດກະສິກຳ ຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ ກັບປະຊາຊົນໃນຮູບແບບຕ່າງໆ ເປັນຕົ້ນແມ່ນຮູບແບບ 2+3 (ປະຊາຊົນເປັນເຈົ້າຂອງທີ່ດິນ ແລະ ແຮງງານ; ສ່ວນຫູ້ລົງທຶນຮັບຜິດຊອບແນວພັນ, ເຕັກນິກ ແລະ ການຕະຫລາດ), ຮູບແບບ 1+4 (ປະຊາຊົນເປັນເຈົ້າຂອງທີ່ດິນ; ຫູ້ລົງທຶນຮັບຜິດຊອບດ້ານແຮງງານ, ແນວພັນ, ເຕັກ

ນິກ ແລະ ການຕະຫຼາດ) ແລະຮູບແບບອື່ນໆ ເພື່ອສົ່ງເສີມດ້ານຕ່າງໜ້າ ແລະ ດັດປັບແກ້ໄຂສິ່ງທີ່ເປັນບັນຫາ.

5). ຕ້ອງສ້າງເງື່ອນໄຂ ແລະ ໂອກາດໃຫ້ແກ່ປະຊາຊົນຊາວກະສິກອນ ໄດ້ຮຽນຮູ້ ແລະ ນໍາໃຊ້ເຕັກນິກວິທະຍາສາດກະສິກໍາສະໄໝໃໝ່, ທັນເປັນກົນຈັກຢູ່ໃນພື້ນທີ່ທີ່ມີເງື່ອນໄຂ, ສະໜອງຂໍ້ມູນຂ່າວສານ ໃຫ້ຊາວກະສິກອນ ໄດ້ຫັນປ່ຽນແບບວິທີການຜະລິດທີ່ຫຼາກຫຼາຍ, ທັດຖະກໍາແບບພື້ນບ້ານ ໄປນໍາໃຊ້ຊັບພະຍາກອນທໍາມະຊາດ, ທີ່ດິນ...ໃຫ້ມີປະສິດທິພາບ, ມີຄຸນນະພາບ ແລະ ຜະລິດຕະພາບສູງຂຶ້ນ, ເພີ່ມຂີດຄວາມສາມາດແຂ່ງຂັນຂອງສິນຄ້າກະສິກໍາ ໃຫ້ນັບມື້ນັບສູງຂຶ້ນ ດ້ວຍຫຼາຍຮູບແບບ, ເປັນຕົ້ນ ການຈັດຝຶກອົບຮົມດ້ານວິຊາການ ການປູກ, ການລ້ຽງ ໃຫ້ປະຊາຊົນໃນແຕ່ລະບ້ານ ຫຼືສູນຄົ້ນຄວ້າຕ່າງໆຂອງກະສິກໍາ; ແນະນໍາດ້ານວິຊາການ ຜ່ານລະບົບສື່ຕ່າງໆ ຢ່າງກວ້າງຂວາງ.

6). ໃຫ້ຮີບຮ້ອນສ້າງແຜນແມ່ບົດພັດທະນາຮອບດ້ານ, ສ້າງເປັນໂຄງການ, ແຜນວຽກ, ແຜນຄົນ, ແຜນເງິນ; ລັດຕ້ອງໃຫ້ບູລິມະສິດ ເຂດຊາຍແດນພູດອຍຊົນເຜົ່າ, ເຂດທີ່ມີຄວາມຫຍຸ້ງຍາກ ນັບທັງບ້ານທີ່ນອນຢູ່ໃນ 23 ເມືອງທີ່ຍັງທຸກຍາກ ດ້ວຍການຈັດສັນແຫຼ່ງທຶນທີ່ມີ ຢ່າງມີຈຸດສຸມ ເພື່ອຂະຫຍາຍເສັ້ນທາງຄົມມະນາຄົມຂົນສົ່ງ ໃຫ້ເຊື່ອມຈອດເຂົ້າກັບທາງຫຼວງແຫ່ງຊາດ, ທາງຫຼວງຂອງແຂວງ, ນະຄອນຫຼວງວຽງຈັນ ເພື່ອໃຫ້ມີເງື່ອນໄຂພັດທະນາ; ພ້ອມນັ້ນ ກໍ່ຍົກສູງຄຸນນະພາບເສັ້ນທາງຊົນນະບົດໃຫ້ດີຂຶ້ນເທື່ອລະກ້າວ, ເຮັດໃຫ້ການຄ້າຊົນນະບົດເຊື່ອມຈອດກັບຕົວເມືອງ. ສືບຕໍ່ພັດທະນາຕາຂ່າຍໄຟຟ້າຊົນນະບົດ ແລະໄຟຟ້າທາງເລືອກອື່ນທີ່ເໝາະສົມ ໃຫ້ທົ່ວເຖິງ,ມີຄວາມປອດໄພ ແລະສາມາດຮັບໃຊ້ການຜະລິດ; ຂະຫຍາຍເຄືອຂ່າຍປົກຄຸມດ້ານໂທລະຄົມມະນາຄົມໃຫ້ທົ່ວເຖິງ; ຍົກຄຸນນະພາບດ້ານການສຶກສາ, ຝຶກອົບຮົມພັດທະນາສີມືແຮງງານໃຫ້ສູງຂຶ້ນ; ພັດທະນາພື້ນຖານໂຄງລ່າງດ້ານສາທາລະນະສຸກ, ໂຄສະນາເຜີຍແຜ່ວຽກງານປ້ອງກັນ, ປິ່ນປົວພະຍາດ, ວຽກງານສຸຂະອະນາໄມ ແລະ ໂພຊະນາການທີ່ດີ, ຕອບສະໜອງແພດ, ໝໍ, ຢາ ແລະ ອຸປະກອນການແພດທີ່ຈໍາເປັນ ໃຫ້ຊົນນະບົດຫຼາຍຂຶ້ນ ໂດຍອີງໃສ່ທ່າແຮງທາງດ້ານຈຸດພິເສດທີ່ຕັ້ງ, ທໍາມະຊາດ, ສິ່ງແວດລ້ອມ ແລະ ສັງຄົມ ເພື່ອພັດທະນາດ້ານເສດຖະກິດ, ການບໍລິການ ເຮັດໃຫ້ຄົນໃນທ້ອງຖິ່ນ ມີສຸຂະພາບແຂງແຮງ, ມີອາຊີບທີ່ໝັ້ນຄົງ, ມີລາຍໄດ້ຈາກການພັດທະນາ ໂດຍມີນະໂຍບາຍສົ່ງເສີມທີ່ສົມເຫດສົມຜົນ ເພື່ອດຶງດູດເອົາຫຼາຍພາກສ່ວນເສດຖະກິດເຂົ້າຮ່ວມ, ໃນນັ້ນ ອາດຈະເລືອກເອົາເມືອງຈໍານວນໜຶ່ງໃນຈໍານວນ 23 ເມືອງທຸກຍາກ ບ່ອນທີ່ມີເງື່ອນໄຂ ເພື່ອສ້າງເປັນຕົວແບບຂອງການພັດທະນາຊົນນະບົດໃໝ່.

7). ໃຫ້ສືບຕໍ່ຈັດສັນພູມລໍາເນົາຄົງທີ່ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນບັນດາເຜົ່າ ຕິດພັນກັບການຢຸດຕິບັນຫາການເຄື່ອນຍ້າຍພົນລະເມືອງແບບຊະຊາຍ; ລັດຖະບານ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ຮີບຮ້ອນກວດກາຄືນປະເພດ ແລະ ຈໍານວນຈຸດສຸມໃນດ້ານນີ້ຄືນໃໝ່ ແລະ ປັບປຸງໃຫ້ສອດຄ່ອງ ໂດຍໃຫ້ສູນກາງຮັບຜິດຊອບຈຸດສຸມທີ່ຈະສ້າງເປັນຕົວແບບ, ເປັນບົດຮຽນໃຫ້ທົ່ວປະເທດ ແລະ ຈຸດສຸມທີ່ກ່ຽວພັນກັບຫຼາຍທ້ອງຖິ່ນ ຫຼື ມີລັກສະນະພິເສດໃດໜຶ່ງ, ສ່ວນເຫຼືອນັ້ນແມ່ນມອບໃຫ້ທ້ອງຖິ່ນຮັບຜິດຊອບຕາມການແບ່ງຂັ້ນຄຸ້ມຄອງ. ໄປຄຽງຄູ່ກັນນັ້ນ ກໍ່ເອົາໃຈໃສ່ຄຸ້ມຄອງໂຄງການຈັດສັນພູມລໍາເນົາ ແລະ ອາຊີບທີ່ມີລັກສະນະທົ່ວໄປ ແລະ ສະເພາະໃຫ້ໄປຕາມກົດໝາຍ ແລະ ລະບຽບທີ່ມີແລ້ວ; ເຮັດໃຫ້ການຈັດສັນປະຊາກອນ ຕິດພັນກັບແຜນສ້າງອຸດສາຫະກໍາ

ແລະການພັດທະນາຕົວເມືອງ ຢູ່ແຕ່ລະເຂດ, ແຕ່ລະພາກຂອງປະເທດ ໃຫ້ກາຍເປັນຈຸດພັດທະນາຊົນນະບົດໃໝ່.

8). ໃຫ້ຄົ້ນຄວ້າອອກນະໂຍບາຍແກ່ປະຊາຊົນ ທີ່ຕັ້ງບ້ານເຮືອນຢູ່ໃນ ຫຼື ໃກ້ຄຽງກັບເຂດປ່າສະຫງວນຂອງລັດ ທີ່ບໍ່ມີຄວາມຈໍາເປັນຈັດສັນຍົກຍ້າຍໄປບ່ອນອື່ນ ໃຫ້ໄດ້ຮັບການພັດທະນາທາງດ້ານເສດຖະກິດ, ຊີວິດການເປັນຢູ່ ທັງເຮັດໜ້າທີ່ໃນການປົກປັກຮັກສາ ແລະພັດທະນາປ່າໄມ້-ຊີວະນາໆພັນ ໃຫ້ມີຄວາມຍືນຍົງ, ເພີ່ມພື້ນທີ່ປົກຫຸ້ມປ່າໄມ້ ໃຫ້ໄດ້ຕາມຄາດໝາຍ; ສົ່ງເສີມໃຫ້ຜູ້ປະກອບການ, ບຸກຄົນ ໄດ້ຮັບສໍາປະທານພັດທະນາທີ່ດິນກະສິກໍາ ແລະປ່າໄມ້ ເປັນບ່ອນບໍລິການການທ່ອງທ່ຽວທໍາມະຊາດ, ເຊິ່ງເປັນທາງອອກໜຶ່ງທີ່ສໍາຄັນ ເພື່ອພັດທະນາຊຸມຊົນ ຢ່າງຍືນຍົງ.

9). ເພີ່ມການລົງທຶນໃຫ້ແກ່ການຄົ້ນຄວ້າວິທະຍາສາດ-ນໍາໃຊ້; ຄົ້ນຄວ້າ ພັດທະນາແນວພັນພືດແລະ ສັດ,ເຕັກນິກການປູກ-ການລ້ຽງ,ການເກັບຮັກສາຫຼັງເກັບກ່ຽວ ແລະການປຸງແຕ່ງ; ໃຫ້ຄວາມຮູ້ກ່ຽວກັບໄພອັນຕະລາຍຕໍ່ສຸຂະພາບຂອງຄົນ ແລະຕໍ່ສັງຄົມ ໃນການໃຊ້ສານເຄມີເຂົ້າໃນການຜະລິດ ເຮັດໃຫ້ການດໍາລົງຊີວິດ ແລະການທໍາມາຫາກິນຂອງຊາວຊົນນະບົດ ມີສະພາບແວດລ້ອມທີ່ດີ, ສະອາດ, ສີຂຽວ ແລະຍືນຍົງ; ສ້າງນະໂຍບາຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຖ່າຍທອດເຕັກໂນໂລຊີທີ່ທັນສະໄໝ;

ສົ່ງເສີມ, ເລືອກເຟັ້ນນັກວິຊາການ, ນັກຮຽນຮູ້ປັນຍາຊົນໜຸ່ມ ທີ່ດີເດັ່ນ, ມີອະນາຄົດຈາກທຸກຂະແໜງການລົງໄປປະຈໍາການຢູ່ຮາກຖານຊົນນະບົດ ໃຫ້ເປັນຂະບວນການພົດພື້ນປະຕິວັດ, ສ້າງໃຫ້ເຂົາເຈົ້າໄດ້ຮຽນຮູ້, ຝຶກຝົນຫຼໍ່ຫຼອມ ແລະເຕີບໃຫຍ່ຈາກຮາກຖານ ໂດຍມີຄາດໝາຍ, ແຜນວຽກ, ກໍານົດເວລາ ແລະມີນະໂຍບາຍ ຢ່າງຈະແຈ້ງ;

ຕ້ອງເພີ່ມທະວີການປັບປຸງ ແລະສັບຊ້ອນຄືນບັນດາ ສູນ, ສະຖານີເຕັກນິກກະສິກໍາ-ປ່າໄມ້ ໃຫ້ເຄື່ອນໄຫວຢ່າງມີປະສິດທິພາບ ແລະມີປະສິດທິຜົນ ໃຫ້ກາຍເປັນສູນສາທິດຮຽນຮູ້ຂອງປະຊາຊົນ ແລະ ຊຸມຊົນ, ຝຶກອົບຮົມໃຫ້ນັກວິຊາການລົງໄປປະຈໍາ ຢູ່ສູນ, ສະຖານີສົ່ງເສີມດ້ານເຕັກນິກ ແລະ ປຸງແຕ່ງກະສິກໍາ ໃຫ້ພຽງພໍ ແລະ ມີກົນໄກການເຄື່ອນໄຫວຊ່ວຍຊາວກະສິກອນຢ່າງເປັນລະບົບ, ຖືເອົາຜົນສໍາເລັດຂອງການປະຕິບັດໜ້າທີ່ຢູ່ຮາກຖານ ເປັນໄມ້ທາງວັດແທກ, ເປັນພື້ນຖານໃຫ້ແກ່ການເລືອກເຟັ້ນເປັນເປົ້າໝາຍຂະຫຍາຍພັກ, ບໍາລຸງກໍ່ສ້າງ, ຈັດວາງສັບຊ້ອນເຂົ້າໃນຕໍາແໜ່ງງານຕ່າງໆ ຢູ່ໃນກົງຈັກການຈັດຕັ້ງຂອງພັກ-ລັດ ແຕ່ລະຂັ້ນ.

10). ປັບປຸງນະໂຍບາຍສິນເຊື່ອຊົນນະບົດ, ບັນດາການຈັດຕັ້ງກອງທຶນພັດທະນາຕ່າງໆ ນັບທັງອັດຕາດອກເບ້ຍ ທີ່ເຄື່ອນໄຫວຢູ່ຊົນນະບົດ ໃຫ້ສົມເຫດສົມຜົນ; ນໍາໃຊ້ທະນາຄານນະໂຍບາຍ ໃຫ້ຖືກຕ້ອງກັບເປົ້າໝາຍແກ້ໄຂຄວາມທຸກຍາກຢ່າງແທ້ຈິງ, ຄົ້ນຄວ້ານະໂຍບາຍຫັນທີ່ດິນເປັນທຶນ ບົນພື້ນຖານສິດນໍາໃຊ້ທີ່ດິນຂອງປະຊາຊົນ ແລະການຈັດຕັ້ງ ເຂົ້າໃນໂຄງການພັດທະນາທີ່ດິນ ຫຼື ສ້າງຕັ້ງວິສາຫະກິດກະສິກໍາ. ພ້ອມດຽວກັນນັ້ນ ກໍ່ມີນະໂຍບາຍເວນຄືນທີ່ດິນໃຫ້ຈະແຈ້ງ ເພື່ອໃຫ້ປະຊາຊົນມີທີ່ດິນທໍາການຜະລິດ, ທີ່ຢູ່ອາໄສ, ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ.

11). ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ (ຊາວບ້ານ), ສ້າງຄົນຊົນນະບົດໃຫ້ເປັນເຈົ້າຊົນນະບົດ ແລະກາຍເປັນນັກພັດທະນາ ໂດຍເລີ່ມຈາກປັບປຸງເນື້ອໃນ ແລະແບບແຜນການນໍາພາຂອງຮາກຖານພັກບ້ານ ໃຫ້ເປັນຫຼັກແຫຼ່ງແກ່ນສານໃນການນໍາພາຮອບດ້ານ ຢູ່ຊົນນະບົດ

ຢ່າງແທ້ຈິງ; ສືບຕໍ່ປັບປຸງລະບົບການບໍລິຫານລັດຂັ້ນເມືອງ, ຂັ້ນບ້ານ ດ້ວຍການເອົາໃຈໃສ່ສ້າງ, ຍົກລະດັບຄວາມຮູ້ ໃຫ້ແກ່ກຸ່ມແຖວພະນັກງານ ແລະ ການຈັດຕັ້ງໃນລະບົບການເມືອງຂັ້ນຮາກຖານ ໃຫ້ເສີມຂະຫຍາຍບົດບາດທີ່ຕັ້ງໜ້າຂອງຕົນ.

12). ໃຫ້ສືບຕໍ່ເພີ່ມທະວີການພົວພັນ-ຮ່ວມມື ກັບຕ່າງປະເທດ, ບັນດາປະເທດເພື່ອນມິດຍຸດທະສາດ, ສະຖາບັນຄົ້ນຄວ້າວິທະຍາສາດ, ສະຖາບັນການເງິນ, ອົງການຈັດຕັ້ງສາກົນ ຢ່າງມີການເລືອກເຟັ້ນ ແລະຄຳນຶງເຖິງປະສິດທິຜົນ ເພື່ອຍາດແຍ່ງກາລະໂອກາດ ຈາກການເຊື່ອມໂຍງພາກພື້ນ ແລະ ສາກົນ ເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ຫຼາຍຂຶ້ນ ແລະແທດກັບຕົວຈິງ.

**III. ການຈັດຕັ້ງປະຕິບັດ.**

1). ຄະນະພັກທຸກຂັ້ນ ຕ້ອງຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນເນື້ອໃນ ຄຳສັ່ງສະບັບນີ້ ໃຫ້ເລິກເຊິ່ງ; ສຳຫຼວດກວດກາຕີລາຄາຄືນ ວຽກງານພັດທະນາຊົນນະບົດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ກຳແໜ້ນແຜນວຽກ, ແຜນຄົນ, ແຜນເງິນ ເພື່ອປັບປຸງໃຫ້ສອດຄ່ອງ ແລະຈັດຕັ້ງປະຕິບັດໃຫ້ຕໍ່ເນື່ອງ ແລະ ແທດເຖິງຕົວຈິງ; ຖືເອົາວຽກງານດັ່ງກ່າວ ເປັນໜ້າທີ່ສຳຄັນໃນການນຳພາຊີ້ນຳ ຂອງຄະນະພັກທຸກຂັ້ນ ຢ່າງເປັນປົກກະຕິ.

2). ຄະນະພັກ, ອົງການປົກຄອງທ້ອງຖິ່ນ ຮີບຮ້ອນປັບປຸງລະບົບການຈັດຕັ້ງ ແລະບຸກຄະລາກອນ ລວມທັງກົນໄກປະສານງານ ແລະ ລະບອບແບບແຜນການຊີ້ນຳການພັດທະນາຊົນນະບົດ ຢູ່ຂັ້ນທ້ອງຖິ່ນ ໃຫ້ເປັນລະບົບ, ຈະແຈ້ງ ໂດຍການເພີ່ມພາລະບົດບາດໃຫ້ຂະແໜງ ແລະ ໜ່ວຍງານທີ່ຮັບຜິດຊອບວຽກພັດທະນາຊົນນະບົດ ກໍຄືວຽກກໍ່ສ້າງຮາກຖານການເມືອງ ຢູ່ຂັ້ນແຂວງ ແລະເມືອງ ເພື່ອເປັນເສນາທິການໃຫ້ແກ່ຄະນະພັກ, ອົງການປົກຄອງ ຂັ້ນຂອງຕົນ.

3). ລັດຖະບານ ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ປັບປຸງບັນດານິຕິກຳທີ່ກ່ຽວຂ້ອງກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອສູ້ຊົນປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ; ກຳນົດມາດຕະຖານ, ຕົວຊີ້ວັດແຫ່ງຊາດ ກ່ຽວກັບການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ໃຫ້ສອດຄ່ອງ ຫຼືໃກ້ຄຽງມາດຕະຖານສາກົນ ເພື່ອເປັນບ່ອນອີງ ໃຫ້ແກ່ບັນດາຂະແໜງການ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ນຳໄປພັນຂະຫຍາຍເປັນເນື້ອໃນແຜນການ, ໂຄງການ ຈັດຕັ້ງປະຕິບັດໃນແຕ່ລະໄລຍະ, ທັງເປັນຄາດໝາຍສູ້ຊົນ ເປັນເນື້ອໃນນຳພາຊີ້ນຳ ແລະ ເປັນພື້ນຖານໃຫ້ແກ່ການປະເມີນຜົນ ຢ່າງເປັນເອກະພາບກັນ. ສ້າງກົນໄກ, ນະໂຍບາຍຄ້ຳປະກັນຫຼຸດຜ່ອນຄວາມສ່ຽງ ໃຫ້ແກ່ຊາວກະສິກອນ; ພ້ອມນັ້ນກໍມີນະໂຍບາຍຍົກເວັ້ນ, ຫຼຸດຜ່ອນພາສີອາກອນ ໃຫ້ເຂດ, ເປົ້າໝາຍບູລິມະສິດພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອຊຸກຍູ້ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ແລະ ສັງຄົມ ເຂົ້າຮ່ວມຢ່າງຕັ້ງໜ້າ ດ້ວຍນະໂຍບາຍທີ່ສົມເຫດສົມຜົນ.

ລັດ ປະຕິບັດບົດບາດຄຸ້ມຄອງ, ສ້າງກົນໄກປຸກລະດົມໃຫ້ທຸກພາກສ່ວນໃນສັງຄົມ ເຂົ້າຮ່ວມປະຕິບັດຢ່າງຫ້າວຫັນ; ສືບຕໍ່ຊີ້ນຳການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບໃນການຕົກລົງຕັດສິນບັນຫາວຽກງານຊົນນະບົດ ລະຫວ່າງບັນດາຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ຈະແຈ້ງ.

4). ມອບໃຫ້ລັດຖະບານ ຊີ້ນຳການຄົ້ນຄວ້າ ເພື່ອປັບປຸງກົນໄກປະສານງານ, ລະບອບແບບແຜນ ແລະຄວາມຮັບຜິດຊອບການຊີ້ນຳວຽກງານພັດທະນາຊົນນະບົດ ໃຫ້ເປັນລະບົບກົມກຽວໃນບັນດາຂະແໜງການກ່ຽວຂ້ອງ ໃຫ້ມີປະສິດທິຜົນ ແລະມີການຫັນປ່ຽນຢ່າງຕັ້ງໜ້າ; ພ້ອມກັນນັ້ນ ກໍ່ສຸມການລົງທຶນເຂົ້າໃສ່ວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ຢູ່ບັນດາຈຸດສຸມບູລິມະສິດຂອງສູນກາງ ແລະ ທ້ອງຖິ່ນ.

5). ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນຂອງພັກ ປະຕິບັດບົດບາດຂອງຕົນຢ່າງເຕັມສ່ວນ ເຂົ້າຮ່ວມໃນການໂຄສະນາເຜີຍແຜ່ ແລະ ຊຸກຍູ້ສົ່ງເສີມສ້າງຂະບວນການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ໃຫ້ມີປະສິດທິຜົນ.

6). ຫ້ອງວ່າການສູນກາງພັກ ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ, ນະຄອນຫຼວງວຽງຈັນ ແລະບັນດາແຂວງ ຕິດຕາມ, ກວດກາ, ຊຸກຍູ້ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ກົມການເມືອງສູນກາງພັກ ມີທິດຊີ້ນຳຢ່າງທັນການ ໃນແຕ່ລະໄລຍະ.

ຕ.ກົມການເມືອງສູນກາງພັກ
ເລຂາທິການໃຫຍ່

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ

ບຸນຍັງ ວໍລະຈິດ